**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ແຂວງຈຳປາສັກ — № 1560

ພະແນກອຸດສາຫະກຳ ແລະ ການຄ້າ — ເລກທີ............/ພອຄ.ຈສ

ຄະນະກຳມະການປະມູນໄມ້ຢຶດຂັ້ນແຂວງ — ແຂວງຈຳປາສັກ, ລົງວັນທີ 04-12-18

## ແຈ້ງການ

ເຖິງ: - ທ່ານປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ.

- ທ່ານປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດປະຈຳແຂວງຈຳປາສັກ.
- ສະມາຄົມປຸງແຕ່ງໄມ້ ແລະ ເຟີນິເຈີໄມ້ສຳເລັດຮູບທົ່ວປະເທດ.
- ຜູ້ອຳນວຍການໂຮງງານປຸງແຕ່ງໄມ້ ແລະ ເຟີນິເຈີໄມ້ສຳເລັດຮູບທົ່ວປະເທດ.

ເລື່ອງ: ການປະມູນຂາຍໄມ້ຢຶດຂອງລັດ.

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 13/05/2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນ, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມຄຳສັ່ງແນະນຳຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0336/ອຄ.ກຂອ, ລົງວັນທີ 13/03/2017 ເລື່ອງ: ແນະນຳການຈັດຕັ້ງປະມູນຂາຍໄມ້ທີ່ຢຶດເປັນຂອງລັດ.
- ອີງຕາມຂໍ້ຕົກລົງຂອງເຈົ້າແຂວງຈຳປາສັກ ສະບັບເລກທີ 1407/ຈຂ.ຈສ, ລົງວັນທີ 27/12/2016 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບປະມູນໄມ້ຢຶດຂັ້ນແຂວງ.
- ອີງຕາມບົດບັນທຶກກອງປະຊຸມຂອງຄະນະກຳມະການປະມູນໄມ້ຂັ້ນແຂວງ ຄັ້ງວັນທີ 08 ພະຈິກ 2018 ແລະ ຄັ້ງວັນທີ 28 ພະຈິກ 2018.

ຄະນະກຳມະການຮັບຜິດຊອບປະມູນໄມ້ຢຶດຂັ້ນແຂວງ(ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາສະມາຊິກຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ແຫ່ງຊາດ, ສະມາຊິກຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ພາຍໃນແຂວງ, ສະມາຄົມເຟີນິເຈີ, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນິເຈີ ແລະ ທຸລະກິດໄມ້ໃນຂອບເຂດທົ່ວປະເທດ ເພື່ອເຂົ້າປະມູນຊື້-ຂາຍ ໃນຂັ້ນຕອນທີ 02 ບ້ວງໄມ້ຢຶດຂອງລັດ ***ຈຳນວນ 777.540 ຕົ້ນ/ເສັ້ນ/ແຜ່ນ, ບໍລິມາດ 3.199,222 ແມັດກ້ອນ(ສາມພັນໜຶ່ງຮ້ອຍເກົ້າສິບເກົ້າຈຸດສອງຮ້ອຍຊາວສອງແມັດກ້ອນ)*** ທີ່ບໍ່ສາມາດປະຕິບັດການປະມູນລາຄາຂາຍໃນງວດກ່ອນ, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ໄມ້ຢຶດຢູ່ໂຮງງານປຸງແຕ່ງໄມ້ແສງຊະນະໄຊ ຊະນິດໄມ້ດູ່ ມີຈຳນວນ 357.058 ຕົ້ນ/ເສັ້ນ, ບໍລິມາດ: 1.422,344 ແມັດກ້ອນ.
2. ໄມ້ຢຶດຢູ່ໂຮງງານເຟີນິເຈີລັດສະໝີໄຊກ ຈຳນວນ 420.482 ຕົ້ນ/ເສັ້ນ, ບໍລິມາດ 1.776,878 ແມັດກ້ອນ ເຊິ່ງໃນນັ້ນມີ:

| | | | | | |
|---|---|---|---|---|---|
| - ຊະນິດໄມ້ດູ່ | ຈຳນວນ | 419.986 ຕົ້ນ/ເສັ້ນ, | ບໍລິມາດ | 1.765,659 | ມກ |
| - ຊະນິດໄມ້ປະດູ່ | ຈຳນວນ | 479 ຕົ້ນ, | ບໍລິມາດ | 2,871 | ມກ |
| - ຊະນິດໄມ້ແຕ້ | ຈຳນວນ | 17 ຕົ້ນ, | ບໍລິມາດ | 8,348 | ມກ |

➢ ໃຫ້ບັນດາທ່ານເຂົ້າມາພົວພັນຊື້ຊອງປະມູນ ທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ( ຂະແໜງການຄ້າພາຍໃນ) ໃນໂມງລັດຖະການ ກຳນົດ 15 ວັນ( ນັບແຕ່ວັນທີ 04 ຫາ 17 ທັນວາ 2018 )

- ສຳລັບມື້ເປີດຊອງປະມູນ ແມ່ນວັນທີ 18 ທັນວາ 2018, ເວລາ 09:00 ໂມງ ສະຖານທີ່ຫ້ອງປະຊຸມຂອງ ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ.
- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 09:30 ໂມງ ຂອງວັນທີ 18 ທັນວາ 2018 ຈຶ່ງໃຫ້ມາມອບ-ສົ່ງ ນຳຄະນະກຳມະການຮັບຜິດຊອບປະມູນໄມ້ຢືດ ທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ, ຖ້າກາຍຖືວ່າສະຫຼະສິດ.
- ລາຄາຊອງປະມູນ : 1,000,000 ກີບ/ຊອງ( ສຳລັບຄ່າຊອງປະມູນນັ້ນແມ່ນບໍ່ສົ່ງຄືນ )

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອເຂົ້າຮ່ວມການປະມູນຊື້-ຂາຍໄມ້ ຕາມກຳນົດເວລາຂ້າງເທິງດ້ວຍ.

ຮອງຫົວໜ້າພະແນກ

(ຄະນະຊີ້ນຳກຳມະການຮັບຜິດຊອບປະມູນໄມ້ຢືດ)

ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ຈຳປາສັກ

ວິໄລສອນ ແກ້ວລາສີ

ຕິດຕໍ່ພົວພັນ:

1. ທ່ານ ທອງສຸກ ກອງແກ້ວ 020 96519 888
2. ທ່ານ ນາງ ອຸໄທທິບ ວົງຈັນທະລາ 020 55630 937
3. ທ່ານ ທັດສະນະເດືອນ ຄຳແກ້ວ 020 95440 773
4. ທ່ານ ນາງ ວັນເພັງ ສຸລິຍາ 020 22028 886